ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ — ເລກທີ 474 /ອຄ.ກອກ.

ກົມອຸດສາຫະກຳ — ນະຄອນຫລວງວຽງຈັນ, ວັນທີ 13 AUG 2010

# ແຈ້ງການ

**ເຖິງ:** ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງວຽງຈັນ.

**ເລື່ອງ:** ໃຫ້ປະຕິບັດມາດຕະການ ຕໍ່ຜູ້ທີ່ເຄື່ອນໄຫວກິດຈະການໂຮງງານ ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 01/99ສພຊ, ລົງວັນທີ 03/04/99.
- ອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ 30/7/07.
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມອຸດສາຫະກຳ ເລກທີ 2457/ອຄ, ລົງວັນທີ 25/12/2010.

ກົມອຸດສາຫະກຳ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໃນໄລຍະຜ່ານມາ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ສົ່ງເສີມ ບັນດາໂຮງງານອຸດສາຫະກຳປຸງແຕ່ງ ໃນທົ່ວປະເທດ, ໂດຍລວມ ເຫັນວ່າ ຂະແໜງການອຸດສາຫະກຳ ແລະ ການຄ້າ ພວກເຮົາປະຕິບັດໄດ້ດີ ໂດຍສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ, ເຮັດໃຫ້ການຄຸ້ມຄອງໂຮງງານ ຫັນເຂົ້າສູ່ລະບົບອຸດສາຫະກຳ ຕາມລະບຽບກົດໝາຍເທື່ອລະກ້າວ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີພໍສົມຄວນ. ແຕ່ໃນນີ້, ຍັງມີຜູ້ປະກອບການຈຳນວນໜຶ່ງ ຖືເບົາຕໍ່ການປະຕິບັດລະບຽບກົດໝາຍ ເຊັ່ນ: ເຄື່ອນໄຫວກິດຈະການໂຮງງານບໍ່ມີໃບອະນຸຍາດ, ບໍ່ຕໍ່ອາຍຸໃບອະນຸຍາດດຳເນີນກິດຈະການໂຮງງານ, ເຄື່ອນໄຫວບໍ່ຖືກຕ້ອງຕາມເປົ້າໝາຍການອະນຸຍາດ, ບໍ່ຮັບປະກັນຄວາມປອດໄພຕໍ່ກຳມະກອນ, ລະເມີດລິຂະສິດ, ສ້າງຜົນ ກະທົບຕໍ່ສະພາບແວດລ້ອມ, ບໍ່ປະຕິບັດພັນທະຂອງຕົນ ແລະ ອື່ນໆ.

ເພື່ອເຮັດໃຫ້ການຄຸ້ມຄອງໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ມີປະສິດທິຜົນ ແລະ ເຂັ້ມງວດຕໍ່ລະບຽບກົດໝາຍ, ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງວຽງຈັນ ປະຕິບັດມາດຕະການຢ່າງເຂັ້ມງວດຕໍ່ຜູ້ລະເມີດ ຕາມທີ່ກຳນົດໄວ້ໃນມາດຕາ 23, 24, 25, 26, 27 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ 30/7/07 ດັ່ງນີ້:

1/. ໃຫ້ດຳເນີນການກ່າວເຕືອນເປັນລາຍລັກອັກສອນ ຕາມມາດຕາ 24, 25 ຂອງຂໍ້ຕົກລົງ ເລກທີ 1301/ອຄ, ມາດຕາ 54, 55 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ຕໍ່ຜູ້ດຳເນີນກິດຈະການໂຮງງານ ໃນກໍລະນີກະທຳຜິດຄັ້ງທີ 1 ເຊັ່ນ: ບໍ່ປະຕິບັດພັນທະຂອງຕົນ ຕາມມາດຕາ 42 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ບໍ່ປະຕິບັດຕາມມາດຕະຖານເງື່ອນໄຂ ຂອງການດຳເນີນກິດຈະການໂຮງງານ ແລະ ບໍ່ປະຕິບັດຕາມຄຳແນະນຳຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.

2/. ໃຫ້ດຳເນີນການປັບໃໝຕາມມາດຕາ 26 ຂອງຂໍ້ຕົກລົງເລກທີ 1301/ອຄ, ມາດຕາ 56 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ຕໍ່ຜູ້ດຳເນີນກິດຈະການໂຮງງານ, ໃນກໍລະນີກະທຳຜິດເປັນຄັ້ງທີ 2 ພາຍຫລັງທີ່ໄດ້ກ່າວເຕືອນແລ້ວ ຄືດັ່ງນີ້:

ກ. ປັບໃໝ 10 ເທົ່າຕົວຂອງຄ່າທຳນຽມໃບອະນຸຍາດດຳເນີນກິດຈະການໂຮງງານ ໃນກໍລະນີໂຮງງານໄດ້ປະຕິບັດຜິດຕໍ່ຂໍ້ໃດໜຶ່ງ ຄື:

1) ເຄື່ອນໄຫວກິດຈະການບໍ່ມີໃບອະນຸຍາດ ຕາມມາດຕາ 4.

2) ຕໍ່ໃບອະນຸຍາດດຳເນີນກິດຈະການບໍ່ທັນກຳນົດເວລາ ຕາມມາດຕາ 8.

3) ຂະຫຍາຍໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ ຕາມມາດຕາ 11.

4) ຍົກຍ້າຍໂຮງງານໂດຍບໍ່ໄດ້ຮັບອະນຸຍາດ ຕາມມາດຕາ 13.

ຂ. ປັບໃໝ 8 ເທົ່າຕົວຂອງຄ່າທຳນຽມໃບອະນຸຍາດດຳເນີນກິດຈະການໂຮງງານ ໃນກໍລະນີໂຮງງານໄດ້ປະຕິບັດຜິດຕໍ່ຂໍ້ໃດໜຶ່ງ ຄື:

1) ຍົກຍ້າຍເຄື່ອງຈັກໂຮງງານໄປສະຖານທີ່ອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຕາມມາດຕາ 14;

2) ໂອນ, ຂາຍ, ໃຫ້ເຊົ່າກິດຈະການ ໂດຍບໍ່ແຈ້ງໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ຊາບ ຫລື ແຈ້ງບໍ່ທັນກຳນົດເວລາ; ຜູ້ຮັບໂອນ, ຊື້, ເຊົ່າກິດຈະການໂຮງງານ ບໍ່ຂໍອະນຸຍາດປ່ຽນຖານະດ້ານກົດໝາຍ ຫລື ຂໍອະນຸຍາດບໍ່ທັນກຳນົດເວລາ ຕາມມາດຕາ 17;

3) ຜູ້ໄດ້ຮັບສິດສືບທອດການດຳເນີນກິດຈະການ ບໍ່ຂໍອະນຸຍາດປ່ຽນແປງຖານະດ້ານກົດໝາຍ ຫລື ຂໍອະນຸຍາດບໍ່ທັນກຳນົດເວລາ ຕາມມາດຕາ 18;

4) ປ່ຽນຊື່ໂຮງງານ, ປ່ຽນຜູ້ດຳເນີນກິດຈະການໂຮງງານ ບໍ່ຂໍອະນຸຍາດປ່ຽນຖານະດ້ານກົດໝາຍ ຫລື ຂໍອະນຸຍາດບໍ່ທັນກຳນົດເວລາ ຕາມມາດຕາ 19;

5) ບໍ່ຂໍໃບອະນຸຍາດດຳເນີນກິດຈະການໂຮງງານສະບັບປ່ຽນແທນ ໃນກໍລະນີໃບອະນຸຍາດເດີມເສຍຫາຍ ຫລື ຖືກທຳລາຍ ຫລື ຂໍອະນຸຍາດບໍ່ທັນກຳນົດເວລາ ຕາມມາດຕາ 20;

6) ເຄື່ອນໄຫວກິດຈະການໂຮງງານ ບໍ່ຖືກຕາມເປົ້າໝາຍຂອງການອະນຸຍາດ, ບໍ່ປະຕິບັດຕາມບົດວິພາກເສດຖະກິດ-ເຕັກນິກ, ແຜນການຜະລິດ ຂອງໂຮງງານ, ມາດຕະຖານດ້ານເຕັກນິກຄວາມປອດໄພ ແລະ ສຸຂະອະນາໄມໂຮງງານ, ບໍ່ປະຕິບັດພັນທະຂອງຕົນ ຕາມມາດຕາ 42 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ບໍ່ປະຕິບັດຕາມຄຳແນະນຳຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ, ຕັດກົ່ວ ຫລື ຕັດກຸນແຈ ທີ່ໜີບໃສ່ເຄື່ອງຈັກໄວ້ເພື່ອບໍ່ໃຫ້ແລ່ນເຄື່ອງຈັກ, ບໍ່ສະໜອງຕົວຢ່າງຜະລິດຕະພັນໂຮງງານ ຫລື ເອກະສານກ່ຽວຂ້ອງ ແກ່ເຈົ້າໜ້າທີ່ກວດກາໂຮງງານ, ບໍ່ປະຕິບັດຕາມແຜນຄຸ້ມຄອງສິ່ງແວດລ້ອມໂຮງງານ ແລະ ລະບຽບການກ່ຽວຂ້ອງສະເພາະ ຕາມມາດຕາ 24.

ຄ. ປັບໃໝ 5 ເທົ່າຕົວຂອງຄ່າທຳນຽມໃບອະນຸຍາດດຳເນີນກິດຈະການໂຮງງານ ໃນກໍລະນີໂຮງງານໄດ້ປະຕິບັດຜິດຕໍ່ຂໍ້ໃດໜຶ່ງ ຄື::

1) ໃຊ້ລິຂະສິດ ຫລື ເຄື່ອງໝາຍການຄ້າຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ປະຕິບັດລະບຽບການກ່ຽວກັບກຳນົດໝາຍເສດຖະກິດ-ເຕັກນິກ, ຄຸນນະພາບ ແລະ ມາດຕະຖານຜະລິດຕະພັນໂຮງງານ ຊຶ່ງເປັນຜົນເສຍຫາຍຕໍ່ຜົນປະໂຫຍດຂອງລັດ, ທຸລະກິດອື່ນ ແລະ ປະຊາຊົນຜູ້ນຳໃຊ້, ຜູ້ບໍລິໂພກ... ຕາມມາດຕາ 12;

2) ຢຸດເຊົາການດຳເນີນກິດຈະການຊົ່ວຄາວເກີນ 1 ປີ ໂດຍບໍ່ແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ຊາບ ຫລື ແຈ້ງບໍ່ທັນກຳນົດເວລາ; ເຄື່ອນໄຫວກິດຈະການໂຮງງານຄືນ ໂດຍບໍ່ໄດ້ຮັບອະນຸຍາດ; ຢຸດເຊົາການດຳເນີນກິດຈະການໂຮງງານຖາວອນ ຫລື ສ່ວນໃດສ່ວນໜຶ່ງ ໂດຍບໍ່ແຈ້ງໃຫ້ຂະແໜງການອຸດສາຫະ

ກຳ ແລະ ການຄ້າ ຊາບ ຫລື ບໍ່ໄດ້ຮັບໃບຢັ້ງຢືນການຢຸດເຊົາ ຫລື ແຈ້ງໃຫ້ຊາບບໍ່ທັນກຳນົດເວລາ ຕາມມາດຕາ 15.

3) ບໍ່ລາຍງານໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ຊາບ ໃນເວລາເກີດອຸບັດຕິເຫດຢູ່ໃນໂຮງງານ ທີ່ພາໃຫ້ຄົນເສຍຊີວິດ ຫລື ບາດເຈັບຢ່າງໜັກ ຫລື ລາຍງານບໍ່ທັນກຳນົດເວລາ ຕາມມາດຕາ 21.

3/. ໃຫ້ປະຕິບັດມາດຕະການທາງອາຍາ ຕາມມາດຕາ 27 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ, ມາດຕາ 57 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ໃນກໍລະນີຜູ້ດຳເນີນກິດຈະການ ຫາກບໍ່ປະຕິບັດມາດຕະການປັບໃໝ ຕາມທີ່ລະບຸໄວ້ ໃນຂໍ້ (2/.) ຂ້າງເທິງນີ້; ປອມແປງໃບອະນຸຍາດດຳເນີນກິດຈະການໂຮງງານ ຫລື ປອມແປງເອກະສານທີ່ກ່ຽວຂ້ອງກັບການເຄື່ອນໄຫວກິດຈະການໂຮງງານ, ບໍ່ປະຕິບັດມາດຕະການທີ່ຮັບປະກັນຄວາມປອດໄພໂຮງງານ ພາໃຫ້ຄົນເສຍຊີວິດ, ເສຍສຸຂະພາບ ແລະ ຈະຖືກໂຈະການດຳເນີນກິດຈະການ ແລະ ຖອນໃບອະນຸຍາດດຳເນີນກິດຈະການໂຮງງານ ພ້ອມທັງດຳເນີນຄະດີຕາມຂະບວນການຍຸຕິທຳ ຫລື ຕາມລະບຽບກົດໝາຍກ່ຽວຂ້ອງ.

4/. ມູນຄ່າການປັບໃໝລະອຽດ ໃຫ້ປະຕິບັດຕາມເອກະສານຊ້ອນທ້າຍ (ປໝ.1) ຂັດຕິດມາພ້ອມນີ້. ສຳລັບເງິນທີ່ປັບໃໝຕາມຂໍ້ (2/.) ຂ້າງເທິງນີ້ ໃຫ້ແບ່ງເປັນ 2 ສ່ວນ ໂດຍແບ່ງໃນອັດຕາ 30% ແລະ 70% ຄືດັ່ງນີ້:

1) ສຳລັບສ່ວນ 70% ແມ່ນໃຫ້ມອບເຂົ້າງົບປະມານຂອງລັດ.

2) ສຳລັບສ່ວນ 30% ແມ່ນໃຫ້ແບ່ງເປັນ 3 ສ່ວນເທົ່າກັນ ໂດຍສ່ວນທີ 1 ໃຫ້ມອບເຂົ້າເປັນຄັງສະສົມທີ່ໃຊ້ເຄື່ອນໄຫວວຽກງານກວດກາໂຮງງານ, ສ່ວນທີ 2 ແມ່ນໃຫ້ມອບເຂົ້າເປັນຄັງສະສົມຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ຫລື ກົມອຸດສາຫະກຳ ແລະ ສ່ວນທີ 3 ແມ່ນໃຊ້ເປັນເງິນນະໂຍບາຍ ຊຸກຍູ້ ໃຫ້ພະນັກງານຜູ້ປະຕິບັດໜ້າທີ່.

5/. ພາຍຫລັງທີ່ໄດ້ປັບໃໝແລ້ວ ໃຫ້ເຮັດບົດບັນທຶກເປັນລາຍລັກອັກສອນ. ໃນກໍລະນີທາກລະເມີດອີກຄັ້ງຕໍ່ໄປ ໃຫ້ປະຕິບັດມາດຕະການຂັ້ນເດັດຂາດ ຄື: ໂຈະການດຳເນີນກິດຈະການໂຮງງານ ແລະ ຖອນໃບອະນຸຍາດດຳເນີນກິດຈະການໂຮງງານ.

6/. ຂອບເຂດສິດໃນການປັບໃໝ ໃຫ້ປະຕິບັດຕາມຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍສິດ ແລະ ໜ້າທີ່ໃນການຄຸ້ມຄອງ ແລະ ກວດກາ ໂຮງງານອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ເລກທີ 1195/ອຄ, ລົງວັນທີ 19/6/09.

7/. ໃຫ້ສະຫລຸບລາຍງານຜົນການຈັດຕັ້ງປະຕິບັດມາດຕະການດັ່ງກ່າວ ຕໍ່ກົມອຸດສາຫະກຳຊາບ ເປັນແຕ່ລະໄລຍະ ຕາມລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

ຫົວໜ້າກົມອຸດສາຫະກຳ

ຫວ່າງ ພົມມະສັກ

- ບ່ອນສົ່ງ:
- ທ່ານ ລັດຖະມົນຕີວ່າການ, ຊ່ວຍວ່າການ ກະຊວງ ອ.ຄ ເພື່ອລາຍງານ.
- ຫ້ອງການກະຊວງ ອ.ຄ ເພື່ອຊາບ.
- ກົມກວດກາ (ກະຊວງ ອ.ຄ) ເພື່ອຊາບ.
- ກົມການຄ້າພາຍໃນ ເພື່ອຊາບ.
- ກົມການນຳເຂົ້າ ແລະ ສົ່ງອອກ ເພື່ອຊາບ.
- ສຳເນົາກົມ.

## ອັດຕາການປັບໃໝ

( ຕາມມາດຕາ 26 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ອ.ກ ປຸງແຕ່ງ ເລກທີ 1031/ອຄ, ລົງວັນທີ 30/7/07 )

| ລ/ດ | ໂຮງງານທີ່ນຳໃຊ້ຄົນງານ ຫລື ເຄື່ອງຈັກ | ຄ່າທຳນຽມໃບອະນຸຍາດ (ກີບ) | ລະເມີດ ມ/ຕ 4, 8, 11, 13 ປັບໃໝ 10 ເທົ່າ (ກີບ) | ລະເມີດ ມ/ຕ 14, 17, 18, 19, 20, 24 ປັບໃໝ 8 ເທົ່າ (ກີບ) | ລະເມີດ ມ/ຕ 12, 15, 21 ຄ່າປັບໃໝ 5 ເທົ່າ (ກີບ) |
|---|---|---|---|---|---|
| 1 | ໃຊ້ຄົນງານແຕ່ 10-25 ຄົນ ຫລື ໃຊ້ເຄື່ອງຈັກຕໍ່າກວ່າ 5 ແຮງມ້າ | 15.000 | 150.000 | 120.000 | 75.000 |
| 2 | ໃຊ້ຄົນງານແຕ່ 26 ຄົນ ຂຶ້ນໄປ ຫລື ໃຊ້ເຄື່ອງຈັກຕໍ່າກວ່າ 5 ແຮງມ້າ | 25.000 | 250.000 | 200.000 | 125.000 |
| 3 | ໃຊ້ເຄື່ອງຈັກແຕ່ 5 ແຮງມ້າຂຶ້ນໄປ ແຕ່ບໍ່ເຖິງ 10 ແຮງມ້າ | 20.000 | 200.000 | 160.000 | 100.000 |
| 4 | ໃຊ້ເຄື່ອງຈັກແຕ່ 10 ແຮງມ້າຂຶ້ນໄປ ແຕ່ບໍ່ເຖິງ 20 ແຮງມ້າ | 30.000 | 300.000 | 240.000 | 150.000 |
| 5 | ໃຊ້ເຄື່ອງຈັກແຕ່ 20 ແຮງມ້າຂຶ້ນໄປ ແຕ່ບໍ່ເຖິງ 50 ແຮງມ້າ | 50.000 | 500.000 | 400.000 | 250.000 |
| 6 | ໃຊ້ເຄື່ອງຈັກແຕ່ 50 ແຮງມ້າຂຶ້ນໄປ ແຕ່ບໍ່ເຖິງ 100 ແຮງມ້າ | 100.000 | 1.000.000 | 800.000 | 500.000 |
| 7 | ໃຊ້ເຄື່ອງຈັກແຕ່ 100 ແຮງມ້າຂຶ້ນໄປ ແຕ່ບໍ່ເຖິງ 200 ແຮງມ້າ | 150.000 | 1.500.000 | 1.200.000 | 750.000 |
| 8 | ໃຊ້ເຄື່ອງຈັກແຕ່ 200 ແຮງມ້າຂຶ້ນໄປ ແຕ່ບໍ່ເຖິງ 300 ແຮງມ້າ | 200.000 | 2.000.000 | 1.600.000 | 1.000.000 |
| 9 | ໃຊ້ເຄື່ອງຈັກແຕ່ 300 ແຮງມ້າຂຶ້ນໄປ ແຕ່ບໍ່ເຖິງ 400 ແຮງມ້າ | 250.000 | 2.500.000 | 2.000.000 | 1.250.000 |
| 10 | ໃຊ້ເຄື່ອງຈັກແຕ່ 400 ແຮງມ້າຂຶ້ນໄປ ແຕ່ບໍ່ເຖິງ 600 ແຮງມ້າ | 350.000 | 3.500.000 | 2.800.000 | 1.750.000 |
| 11 | ໃຊ້ເຄື່ອງຈັກແຕ່ 600 ແຮງມ້າຂຶ້ນໄປ ແຕ່ບໍ່ເຖິງ 800 ແຮງມ້າ | 500.000 | 5.000.000 | 4.000.000 | 2.500.000 |
| 12 | ໃຊ້ເຄື່ອງຈັກແຕ່ 800 ແຮງມ້າຂຶ້ນໄປ ແຕ່ບໍ່ເຖິງ 1.000 ແຮງມ້າ | 750.000 | 7.500.000 | 6.000.000 | 3.750.000 |
| 13 | ໃຊ້ເຄື່ອງຈັກແຕ່ 1.000 ແຮງມ້າຂຶ້ນໄປ ແຕ່ບໍ່ເຖິງ 2.000 ແຮງມ້າ | 1.000.000 | 10.000.000 | 8.000.000 | 5.000.000 |
| 14 | ໃຊ້ເຄື່ອງຈັກແຕ່ 2.000 ແຮງມ້າຂຶ້ນໄປ ແຕ່ບໍ່ເຖິງ 3.000 ແຮງມ້າ | 1.125.000 | 11.250.000 | 9.000.000 | 5.625.000 |
| 15 | ໃຊ້ເຄື່ອງຈັກແຕ່ 3.000 ແຮງມ້າຂຶ້ນໄປ ແຕ່ບໍ່ເຖິງ 4.000 ແຮງມ້າ | 1.500.000 | 15.000.000 | 12.000.000 | 7.500.000 |
| 16 | ໃຊ້ເຄື່ອງຈັກແຕ່ 4.000 ແຮງມ້າຂຶ້ນໄປ ແຕ່ບໍ່ເຖິງ 5.000 ແຮງມ້າ | 1.750.000 | 17.500.000 | 14.000.000 | 8.750.000 |
| 17 | ໃຊ້ເຄື່ອງຈັກແຕ່ 5.000 ແຮງມ້າຂຶ້ນໄປ | 2.000.000 | 20.000.000 | 16.000.000 | 10.000.000 |

- ໝາຍເຫດ: ໃຊ້ຂໍ້ຕົກລົງແຈ້ງການ ກົມອຸດສາຫະກຳ ເລກທີ 474/ອຄ.ກອກ, ລົງວັນທີ 13/8/2010